Mekong River Commission
For Sustainable Development

FACEBOOK

*ການເຜີຍແຜ່ຮ່ວມກັນ*

# ເຟສບຸກຮ່ວມມືກັບຄະນະກຳມາທິການແມ່ນ້ຳຂອງສາກົນ ເພື່ອຍົກລະດັບຄວາມຮູ້ ກ່ຽວກັບ ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ໃນແມ່ນ້ຳຂອງ

**ນະຄອນຫຼວງວຽງຈັນ, ສປປ ລາວ / ນະຄອນຫຼວງຮ່າໂນ້ຍ, ສສ ຫວຽດນາມ, ວັນທີ 31 ສິງຫາ 2020** - ເຟສບຸກ ແລະ ກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ໄດ້ລິເລີ່ມການຮ່ວມມືກັນ ເພື່ອສະໜອງຂໍ້ມູນການເຕືອນໄພນ້ຳຖ້ວມລ່ວງໜ້າ ແລະ ການຕິດຕາມໄພແຫ້ງແລ້ງໃຫ້ແກ່ຊຸມຊົນ ແລະ ລັດຖະບານໃນເຂດລຸ່ມແມ່ນ້ຳຂອງ.

ການຮ່ວມມືຄັ້ງທຳອິດນີ້ ແມ່ນແນໃສ່ເພື່ອສ້າງຄວາມຮັບຮູ້ໃຫ້ແກ່ປະຊາຊົນທົ່ວໄປໃນ 4 ປະເທດສະມາຊິກ (ຄມສ) - ຣາຊະອານາຈັກ ກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ, ແລະ ສສ ຫວຽດນາມ - ກ່ຽວກັບ ລະບົບຂໍ້ມູນຂ່າວ-ສານກ່ຽວກັບໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງຂອງ ຄມສ ແລະ ເພື່ອສ້າງຄວາມອາດສາມາດໃຫ້ແກ່ເຈົ້າໜ້າທີ່ກ່ຽວຂ້ອງ ໃນການນຳໃຊ້ລະບົບດີຈິຕອນ ອອນລາຍ ໃນລະຫວ່າງປີ 2020-2021.

ທ່ານ ນາງ ຊານຕິ ອາເລັກຊານເດີ້, ຜູ້ຈັດການດ້ານຊຸມຊົນ ອາຊີ - ປາຊີຟິກ ຂອງເຟສບຸກ ໄດ້ກ່າວວ່າ “ພວກເຮົາກຳລັງຊອກຫາວິທີໃໝ່ໆ ເພື່ອສະໜັບສະໜູນ ໃນການພັດທະນາໃນລະດັບພາກພື້ນ ຢູ່ໃນເຟສບຸກ, ດ້ວຍຊຸດເຄື່ອງມືທີ່ສະໜັບສະໜູນຊຸມຊົນໃນການກະກຽມ, ຕອບໂຕ້ ແລະ ຟື້ນຟູຈາກໄພພິບັດ ແລະ ສ້າງຄວາມຍືດຍຸ່ນ, ພວກເຮົາມີຄວາມຍິນດີທີ່ໄດ້ຮ່ວມມືກັບ ຄມສ ເພື່ອແຈ້ງໃຫ້ປະຊາຊົນຫຼາຍລ້ານຄົນໃນພາກພື້ນ ໄດ້ຮັບຮູ້ ແລະ ກຽມຄວາມພ້ອມ ຕໍ່ກັບໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ”.

ອີງຕາມ ບົດລາຍງານຂອງອົງການສະຫະປະຊາຊາດ ກ່ຽວກັບການສູນເສຍທາງດ້ານເສດຖະກິດ, ຄວາມທຸກຍາກ ແລະ ໄພພິບັດ, ສອງທົດສະວັດທີ່ຜ່ານມາໄດ້ເຫັນການສູນເສຍທາງດ້ານເສດຖະກິດໂດຍກົງຈາກໄພພິບັດທີ່ກ່ຽວຂ້ອງກັບ ດິນຟ້າອາກາດເພີ່ມຂຶ້ນເຖິງ 250%. ໃນຂົງເຂດແມ່ນ້ຳຂອງໃນໄລຍະປີ 1998-2017, ເຊິ່ງຣາຊະອານາຈັກໄທ ໄດ້ຮັບຜົນກະທົບ ໜັກທີ່ສຸດ, ປະເມີນຄວາມເສຍຫາຍປະມານ 52,4 ຕື້ໂດລາ.

(ຄມສ) ໄດ້ຕີລາຄາວ່າ ໃນຂະນະທີ່ໄພນ້ຳຖ້ວມຕາມລະດູການ ເຊິ່ງໄດ້ນຳເອົາຜົນປະໂຫຍດທີ່ຫຼາກຫຼາຍໃຫ້ແກ່ພາກພື້ນ, ຄ່າໃຊ້ຈ່າຍສະເລ່ຍຕໍ່ປີຂອງນ້ຳຖ້ວມໃນເຂດລຸ່ມແມ່ນ້ຳຂອງ ແມ່ນປະມານ 60-70 ລ້ານໂດລາສະຫະລັດ. ຣາຊະອານາຈັກ ກຳປູເຈຍ ແລະ ສສ ຫວຽດນາມ ແມ່ນກວມເອົາປະມານສອງໃນສາມຂອງພາກພື້ນແມ່ນ້ຳຂອງ ທີ່ໄດ້ຮັບຄວາມເສຍຫາຍຈາກໄພນ້ຳຖ້ວມປະຈຳປີ.

ໃນການສຶກສາຂອງ (ຄມສ) ທີ່ຜ່ານມານັ້ນ ຍັງສະແດງໃຫ້ເຫັນວ່າເຫດການໄພແຫ້ງແລ້ງ ໃນລຸ່ມແມ່ນ້ຳຂອງ ໄດ້ເພີ່ມຂຶ້ນເລື້ອຍໆ ແລະ ຮຸນແຮງ ໃນທົດສະວັດທີ່ຜ່ານມາ ແລະ ທ່າອ່ຽງນີ້ຈະຍັງສືບຕໍ່. ອ່າງນ້ຳຂອງແມ່ນຍັງມີຄວາມສ່ຽງຕໍ່ຜົນກະທົບຈາກການປ່ຽນແປງດິນຟ້າອາກາດນຳອີກ ເຊິ່ງຄາດວ່າອຸນຫະພູມສະເລ່ຍ ຈະເພີ່ມຂຶ້ນ ປະມານ 0.8 ອົງສາເຊ ໃນປີ 2030.

ທ່ານ ປອ. ອານຸລັກ ກິດຕິຄຸນ ຫົວໜ້າ ວາງແຜນຍຸດທະສາດ ແລະ ການຮ່ວມມື ຂອງ (ຄມສ) ໄດ້ກ່າວວ່າ "ພວກເຮົາເຫັນຄວາມສຳຄັນທີ່ສຸດໃນການສະຫນອງຂໍ້ມູນທີ່ວ່ອງໄວ ແລະ ຫນ້າເຊື່ອຖື ກ່ຽວກັບ ລະດັບນ້ຳໃຫ້ແກ່ບັນດາປະເທດແມ່ນ້ຳຂອງ ແລະ ຊຸມຊົນທີ່ປະສົບກັບໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ແລະ ສະພາບອາກາດປ່ຽນແປງຕະຫຼອດເວລາ

ເພື່ອໃຫ້ພວກເຂົາເຫລົ່ານັ້ນສາມາດຮັບມື ເພື່ອຫລີກລ່ຽງ ຫຼື ຫລຸດຜ່ອນຄວາມສ່ຽງ ໄດ້ທັນເວລາ ແລະ ກະກຽມການຕອບໂຕ້ທີ່ມີປະສິດທິຜົນ".

(ຄມສ) ໄດ້ຕິດຕັ້ງສະຖານີອຸທົກກະສາດ 22 ແຫ່ງ ຕາມສາຍນ້ຳຫຼັກຂອງແມ່ນ້ຳຂອງຕອນລຸ່ມ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນລະດັບນ້ຳ ແລະ ປະລິມານນ້ຳຝົນ ເຊິ່ງປ້ອນເຂົ້າໃນລະບົບພະຍາກອນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງຂອງແມ່ນ້ຳຂອງ. ລະບົບດັ່ງກ່າວ ສະໜອງຂໍ້ມູນ ລະດັບນ້ຳປະຈຳວັນ ໃຫ້ແກ່ປະຊາຊົນ ແລະ ພາກລັດ ລວມທັງການແຈ້ງເຕືອນໄພນ້ຳຖ້ວມ ແລະ ການຄາດຄະເນໄພແຫ້ງແລ້ງຕະຫຼອດປີ. ລະບົບດັ່ງກ່າວຈະຖືກອະທິບາຍຜ່ານວີດີໂອ ແບບສາມມິຕິ 3D ເຊິ່ງຈະຖືກແບ່ງປັນລົງເຟສບຸກ ເພື່ອການເຂົ້າເຖິງຊຸມຊົນໃນທ້ອງພາກພື້ນ.

ເຟສບຸກຍັງຈະເຝິກອົບຮົມໃຫ້ເຈົ້າໜ້າທີ່ກ່ຽວຂ້ອງຈາກ 4 ປະເທດສະມາຊິກ (ຄມສ) ກ່ຽວກັບວິທີການໃຊ້ເຄື່ອງມືດິຈິຕອນທີ່ແຕກຕ່າງກັນເພື່ອໃຫ້ສື່ສານຢ່າງມີປະສິດທິຜົນ ແລະ ວ່ອງໄວ ໃນລະຫວ່າງ ແລະ ຫຼັງ ເກີດໄພພິບັດ, ເຊິ່ງຈະປະກອບມີການເຝິກອົບຮົມ ກ່ຽວກັບ ແຜນທີ່ປະຊາກອນຂອງເຟສບຸກ (Facebook's Population Density Maps), ເຊິ່ງເປັນແອັບພິເຄຊັ້ນທີ່ໃຊ້ເຕັກນິກ ພາບຄອມພິວເຕີທີ່ທັນສະໄໝ (State-of-the-art computer Visual Techniques) ເພື່ອສັງລວມຂໍ້ມູນທີ່ມີຢູ່ໃນສາທາລະນະ ແລະ ພາກສ່ວນທຸລະກິດ ເຂົ້າກັບຄວາມສາມາດທາງປັນຍາປະດິດ ຫຼື AI ຂອງເຟສບຸກ. ແຜນທີ່ນີ້ແມ່ນມີລາຍລະອຽດສາມເທົ່າກ່ວາແຫຼ່ງທີ່ມີຢູ່.

**ໝາຍເຫດ:**

**ກ່ຽວກັບ ຄມສ:** ຄະນະກຳມາທິການແມ່ນ້ຳຂອງສາກົນ ແມ່ນ ອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມື ໃນອ່າງແມ່ນ້ຳຂອງຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງ ລະຫວ່າງ ຣາຊະອານາຈັກ ກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ, ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນ ສູນກາງຄວາມຮູ້ ການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາ ທີ່ຍືນຍົງ ຂອງ ພາກພື້ນ.

**ກ່ຽວກັບ ເຟສບຸກ:** ສ້າງຕັ້ງຂຶ້ນໃນປີ 2004, ພາລະກິດຂອງເຟສບຸກ ແມ່ນເພື່ອໃຫ້ປະຊາຊົນມີພະລັງໃນການສ້າງຊຸມຊົນແລະ ເຮັດໃຫ້ໂລກໃກ້ຊິດກັນຂຶ້ນ. ປະຊາຊົນນຳໃຊ້ ແອັບພິເຄຊັ້ນ ແລະ ເຕັກໂນໂລຊີຂອງ ເຟສບຸກ ເພື່ອເຊື່ອມຕໍ່ກັບໝູ່ເພື່ອນ ແລະ ຄອບຄົວ, ຊອກຫາຊຸມຊົນ ແລະ ຂະຫຍາຍທຸລະກິດ.

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ :**
ທ່ານ ໂສພຽກ ແມ, ເຈົ້າໜ້າທີ່ ການຂ່າວສື່ສານ,
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ມືຖື/ວອດແອັບ: +856-20-77779168

ທ່ານ ນາງ Nguyen Quynh Trang
ຜູ້ຈັດການດ້ານການສື່ສານ
ເຟສບຸກ ສສ ຫວຽດນາມ & ຣາຊະອານາຈັກ ກຳປູເຈຍ
ອີເມວ: quynhtrang@fb.com

###